# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ ໒0 ສິງຫາ ໒005 (08-໒0-໒006)

## <u>ເຮັດໃຫ້ມີຄວາມແຕກຕ່າງເກີດຂຶ້ນຢູ່ໃນໂລກ</u>

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ( ມັດທາຍ 5:13-16; 1 ໂກຣິນໂທ 1:໒6-31; ໒ ໂກຣິນໂທ 6:14-7:1 )

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າຊົງຕ້ອງການທີ່ຈະໃຊ້ຜູ້ທີ່ເຊື່ອໃຫ້ອອກໄປເປັນຕົວແທນໃນການປ່ຽນແປງ ແປງສະພາບຂອງຄົນແລະຮີດຄອງປະເພນີທີ່ເຂົາຖືກັນຢູ່.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍໃຫ້ຜູ້ທີ່ມີຄວາມເຊື່ອທີ່ໃຫຍ່ແລ້ວຄືໃນຖານະທີ່ເປັນຕົວແທນ ໃນການທໍາງານຂອງພຣະເຈົ້າຄືການປ່ຽນແປງຮີດຄອງປະເພນີຂອງພວກເຂົາໂດຍ:

* ເພື່ອໃຫ້ເຂົ້າໃຈຄວາມຫມາຍຂອງການເປັນຕົວແທນໃນຕົວແຕ່ຈະຕ້ອງເຮັດໃຫ້ເຖິງທີ່ສຸດໃນການທີ່ຈະນໍາຄົນ ມາຫາພຣະຄຣິດ; ແລະ
* ເພື່ອຈະໄດ້ຈະເຣີນເຕີບໂຕຂຶ້ນໃນທາງທີ່ຈະເປັນຕົວແທນທີ່ເປັນເກືອ ແລະເປັນແສງສະວ່າງໃນສະພາບແວດ ລ້ອມອ້ອມຂ້າງໃນການຊຶມຊັບເຂົ້າໄປ.

## <u>ສຶກສາພຣະຄັມພີ</u>

### ແມ່ນຫຍັງທີ່ພຣະເຈົ້າສາມາດຊົງໃຊ້ໂດຍຜ່ານທາງຂ້າພະເຈົ້າ

ຫລາຍປີຜ່ານມາຂ້າພະເຈົ້າໄດ້ຮັບໃຊ້ຢູ່ໃນ Chistian Life Commission of the Southern Baptist Convention. ໃນຫົວຂໍ້ການປະຊຸມຄັ້ງນຶ່ງຂ້າພະເຈົ້າໄດ້ຮັບໃບປີ້ວນ້ອຍໆ ອັນນຶ່ງໃນນັ້ນມີຄໍາຂຽນໄວ້ວ່າ " ຈົ່ງຊ່ວຍປ່ຽນແປງຄົນໃນໂລກ " ຂ້າພະເຈົ້າຍັງໄດ້ເກັບຂໍ້ຄວາມນີ້ໄວ້ໃນຕູ້ທີ່ເກັບມ້ຽນປື້ມເອກກະສານແລະສິ່ງນີ້ໄດ້ເຕືອນຂ້າພະເຈົ້າຢູ່ສເມີໃນການທີ່ໄດ້ຖືກເອີ້ນມາເປັນຜູ້ຮັບໃຊ້ຂອງພຣະເຢຊູ. ທ່ານຈະອະທິບາຍຄໍາວ່າຈົ່ງຊ່ວຍປ່ຽນແປງຄົນໃນໂລກ ໃນຂໍ້ທ່ອງຈໍານີ້? ທ່ານຈະຍອມທີ່ຈະເປັນເຫມືອນດັ່ງບຸກຄົນດັ່ງກ່າວນີ້ຫລືບໍ່? ໃນຄວາມຄິດເຫັນຂອງທ່ານແມ່ນຫຍັງທີ່ຕ້ອງປ່ຽນແປງຫລາຍທີ່ສຸດຢູ່ໃນໂລກນີ້?

ຈຸດປະສົງຂອງບົດຮຽນບົດນີ້ເພື່ອຊ່ວຍໃຫ້ທ່ານໄດ້ເຂົ້າໃຈໃນຫນ້າທີ່ວຽກງານທີ່ທ່ານຖືກມອບຫມາຍໃຫ້ເປັນຕົວແທນໃນການທີ່ຈະເປັນສູນກາງປ່ຽນແປງການເຜີຍແຜ່ຢູ່ໃນເຂດຣັສມີທີ່ອ້ອມຕົວຂອງທ່ານ. ບົດຮຽນນີ້ກໍຈະຊ່ວຍໃຫ້ທ່ານໄດ້ໃຊ້ຈິດໃຈທີ່ສາມາດນໍາທິດທາງຂອງພຣະເຈົ້າມາໃຊ້ໃນການປ່ຽນແປງປະເພນີແລະຕົວບຸກຄົນນໍາອີກ.

1. **<u>ຈົ່ງແຍກຕົວຂອງທ່ານອອກຈາກໂລກ</u>:** ( ໒ ໂກຣິນໂທ 6:14 - 7:1 )

ບໍ່ໄກຈາກບ່ອນທີ່ຂ້າພະເຈົ້າຢູ່ປານໃດ, ມີຄະນະຄຣິສຕຽນກຸ່ມນຶ່ງທີ່ໄດ້ແຍກຕົວອອກຢູ່ຕ່າງຫາກໂດຍມີການໃຫ້ຄໍາຫມັ້ນສັນຍາແກ່ກັນແລະກັນວ່າຈະບໍ່ມີການພົວພັນກັບທຸກສິ່ງທີ່ " ຄົນໃນໂລກນີ້ປະຕິບັດຕໍ່ກັນ ". ຕາມຄວາມເຂົ້າໃຈໃນພຣະຄັມພີຂອງພວກເຂົາແມ່ນ, ໃນຄໍາດັ່ງກ່າວນີ້, ຄືພຣະເຈົ້າໄດ້ເອີ້ນເຂົາໃຫ້ອອກມາແລະແຍກຢູ່ຕ່າງຫາກຈາກຄົນຝ່າຍໂລກຖ້າເປັນໄປໄດ້. ດັ່ງນັ້ນພວກເຂົາຈຶ່ງປະຕິເສດທີ່ຈະໃຊ້ສິ່ງຂອງທຸກສິ່ງຢ່າງທີ່ໂລກໄດ້ຜລິດຂຶ້ນມາເຊັ່ນ: ຣົດຍົນ, ໂທຣະສັບ, ເຄື່ອງໃຊ້ໄຟຟ້າ, ເຄື່ອງຊ່ວຍແຮງພາຍໃນບ້ານເຮືອນ, ແລະ ຕໍ່ ໆ ໄປຕາມລາຍການທີ່ຍັງມີຢູ່.

ຄວາມຫມາຍຂອງການໃຫ້ຄໍາສັ່ງຄໍານີ້ຂອງໂປໂລແມ່ນຫຍັງ: ຢ່າຜູກພັນກັບຄົນທີ່ບໍ່ເຊື່ອ? ແລະພວກເຮົາຈະຕອບໃຫ້ຖືກຄວາມຫມາຍວ່າຢ່າງໃດໃນຂໍ້ 17, **ຈົ່ງອອກມາຈາກຖ້າມກາງເຂົາເຫລົ່ານັ້ນແລະຈົ່ງຢູ່ຕ່າງຫາກ, ພຣະເຈົ້າເວົ້າ**

**ຢ່າງນີ້ບໍ່?** ແມ້ແຕ່ຜູ້ທີ່ເຊື່ອເອງກໍຍັງມີຄວາມບໍ່ເຫັນພ້ອມໃນຂໍ້ນີ້ໃນຄຳຕອບຂອງຄຳຖາມນີ້. ທ່ານຢູ່ໃນຖານະອັນໃດ?

ຈົ່ງຊອກຫາຄວາມຊ່ວຍເຫລືອຄຳຕອບຈາກຈົດໝາຍຂອງໂປໂລທີ່ຂຽນໄປຫາພີ່ນ້ອງທີ່ເມືອງໂກຣິນໂທ ( 1 ກຣທ. 5:9-10 ). ແລະໃນຂໍ້ນີ້ເພິ່ນໄດ້ບອກເຖິງຄຳຕອບຈາກຈົດໝາຍສະບັບກ່ອນພຸ້ນໂດຍຄຳເຕືອນດັ່ງນີ້, "ຢ່າຄົບຫາຄົນຫລິ້ນຊູ້." ແລະເພິ່ນກໍໄດ້ອະທິບາຍຕໍ່ໄປແຕ່ບໍ່ໃຊ່ໝາຍເຖິງຊາວໂລກທີ່ຫລິ້ນຊູ້, ຫລືຄົນໂລບ, ແຕ່ເປັນຄົນໄຫວ້ພຣະທຽມທີ່ອ້າງຕົນເອງວ່າເປັນຄຣິສຕຽນແລະເຂົາກໍເປັນຄົນທີ່ໄປນະມັສການຢູ່ທີ່ໂບດໃນຂົງເຂດນັ້ນ. ພວກເຮົາຈະບໍ່ຍອມໃຫ້ການຄ້ຳປະກັນວ່ານັ້ນແມ່ນມີຊີວິດການເປັນຢູ່ທີ່ໃຫຍ່ເຕັມບໍຣິບູນແລະຊຳນານແລ້ວໃນການສະແດງອອກວ່າເປັນຄຣິສຕຽນໂດຍຄວາມບາບຂອງເຂົາໄດ້ຖືກຍອມຮັບແລ້ວຈາກພວກເຮົາ.

ໃຫ້ເຂົ້າໃຈຫລາຍກວ່ານັ້ນໃນການແປບົດຮຽນຂໍ້ນີ້ ໄດ້ພົບກັບຂໍ້ຄວາມທີ່ໂປໂລໄດ້ເລືອກທີ່ຈະອະທິບາຍຄວາມສຳພັນລະຫວ່າງຄົນທີ່ເຊື່ອແລະຄົນທີ່ບໍ່ເຊື່ອ: **ຫຸ້ນສ່ວນກັນ, ສາມັກຄີທັມ, ແລະລົງລອຍກັນ.** ຄຳເຫລົ່ານີ້ແມ່ນໄດ້ອະທິບາຍເຖິງການມີຄວາມສຳພັນທັມມະດາລະຫວ່າງຄົນສອງຄົນຄື-ການປັນຜົນກຳໄລ. ທີ່ໂປໂລຊີ້ໃຫ້ເບິ່ງຈຸດນີ້ພິເສດກໍເພື່ອໃຫ້ຮູ້ວ່າຄຣິສຕຽນຜູ້ນື່ງອາດມີຄວາມສຳພັນກັບຄົນທີ່ບໍ່ເຊື່ອຜູ້ນື່ງ, ແຕ່ທັງສອງຄົນແມ່ນມາຈາກພື້ນຖານຄວາມເຊື່ອທີ່ແຕກຕ່າງກັນ.

ໂປໂລໄດ້ຕັ້ງຄຳຖາມເປັນເຣື່ອງຕໍ່ກັນແລະຈຸດພິເສດ, ແມ່ນຫຍັງຄື**ຄວາມຊອບທັມແລະອະທັມ, ...ຄວາມສະວ່າງ** ແລະ**ຄວາມມືດ, ແລະພຣະຄຣິດ**ກັບ**ເບລີອານ** ( ຊາຕານ ), ແມ່ນຄຳທັມມະດາບໍ່? ຈົ່ງເປັນຜູ້ສລາດ, **ແມ່ນຫຍັງຄືຄວາມຜູກພັນກັບຄົນທີ່ບໍ່ເຊື່ອໃນຖານະສເມີກັນ?** ແລະຄຳຕອບທີ່ແນ່ນອນແລະຖືກຕ້ອງທີ່ສຸດກໍຄືບໍ່ມີຈັກຢ່າງທີ່ຢູ່ຝ່າຍດຽວກັນ-ທັງໝົດແມ່ນກົງກັນຂ້າມກັນ.

ໃນຂໍ້ 16 ໄດ້ບອກລາຍລະອຽດກ່ຽວກັບ**ບວິຫານຂອງພຣະເຈົ້າ** ( ສະຖານທີ່ພິເສດສັກສິດ ). ພວກນັບຖື**ຮູບໂຄຣົບ**ແນ່ນອນພວກເຂົາຈະບໍ່ມີບ່ອນທີ່ສັກສິດຢ່າງນັ້ນ. ມີແຕ່ຜູ້ທີ່ບໍ່ມີຄວາມຄິດເທົ່ານັ້ນທີ່ຈະເລືອກສະຖານທີ່ຢ່າງນັ້ນໃຫ້ເທົ່າທຽມກັບວິຫານຂອງພຣະເຈົ້າແລະໃຫ້ຄວາມໂຄຣົບສນິດສນົມກັບຜູ້ທີ່ບໍ່ເຊື່ອໃຫ້ມີຖານະເທົ່າທຽມກັນ.

ໂປໂລໄດ້ຮວມຂໍ້ຄວາມເຫລົ່ານີ້ໃຫ້ມີຄວາມໝາຍແລະແລະຊີ້ໃຫ້ເຫັນທັງເຂົ້າໃຈຢ່າງເລິກເຊິ່ງໃນຂໍ້ 16-18 . ຂໍ້ຄວາມນີ້ໄດ້ກ່າວເຖິງພຣະເຈົ້າເປັນຜູ້ຊົງເລືອກທີ່ຈະ**ຢູ່ຖ້າມກາງຄົນຂອງພຣະອົງ,** ພຣະອົງຊົງເອີ້ນເຂົາໃຫ້**ແຍກອອກມາ**ຈາກຖ້າມກາງສິ່ງເຫລົ່ານັ້ນທີ່ພຣະອົງບໍ່ຊົງພໍພຣະທັຍ, ແລະຈົ່ງສຸມຈິດໃຈໃສ່ການຮ່ວມສຳພັນໃນຖານະຄອບຄົວດຽວກັນກັບພຣະອົງແລະພຣະເຈົ້າຜູ້ຊົງເປັນ**ພຣະບິດາ**ຂອງພວກເຂົາ.

ໂປໂລໄດ້ມ້ວນທ້າຍດ້ວຍຄຳສັນຍາກັບພຣະເຈົ້າໃນຂໍ້ 16-18. ເພິ່ນໄດ້ເອີ້ນພວກທີ່ໄດ້ອ່ານຈົດໝາຍສະບັບນີ້ໃຫ້ຊຳຣະຕົວ**ຈາກຮອຍເປື້ອນທຸກຢ່າງຂອງເນື້ອກາຍແລະຈິດວິນຍານ.** ຄືການລ້າງມືທີ່ເປິເປື້ອນ, ແລະຈະຕ້ອງຊຳຣະລ້າງຮ່າງກາຍແລະຈິດວິນຍານເຊັ່ນດຽວກັນ. **ຄືໄດ້ກາຍເປັນຜູ້ສະອາດບໍຣິສຸດແລະຫັນໜີຈາກຄວາມບາບກໍເພື່ອຈະໄດ້ຮັບຂອງພຣະຣາຊທານຄືຊົງໃຫ້ອະພັຍແລະປະທານຄວາມບໍຣິສຸດຂອງພຣະຄຣິດ**( 1 ໂຢຮັນ. 1:9 )ງ

**ຊຳຣະລ້າງ** ກໍມີຄວາມໝາຍວ່າໄດ້ແຍກອອກຢູ່ຕ່າງຫາກ, ກໍຄືຄວາມບໍຣິສຸດທີ່ມີ**ຄວາມຢຳເກງພຣະເຈົ້າ** ( ເປັນບ່ອນສັ່ງສອນແລະສະຖານທີ່ສັກສິດເພື່ອພຣະເຈົ້າ ), ພວກເຮົາຈະຕິດຕາມການຕັກເຕືອນຂອງໂປໂລທີ່ມີໃນພຣະທັມຂໍ້ນີ້ແລະຈະພະຍາຍາມເຮັດຕາມພຣະປະສົງຂອງພຣະເຈົ້າ.

ຜູ້ທີ່ເຊື່ອໄດ້ຮັບເອົາການຝຶກແອບເປັນປັນຍາທີ່ພຣະເຈົ້າປະທານໃຫ້ໃນການທີ່ຈະແຍກຕົວອອກຈາກໂລກນີ້ແລະປ່ຽນເປັນການມີສ່ວນຮ່ວມເຮັດໃຫ້ໂລກນີ້ໄດ້ເຫັນ. ຜູ້ທີ່ເຊື່ອຄວນຈະເຮັດແທ້ທຳຈິງທາງສອງທາງຄືປະຕິບັດຕາມພຣະບັນຊາຂອງພຣະຄຣິດແລະຕາມພຣະຄັມພີໄດ້ບອກໄວ້ຄືແຍກຕົວອອກຈາກໂລກແລະເຮັດໃຫ້ຕົນເອງເປັນຕົວແທນຂອງພຣະເຈົ້າ, ແມ້ແຕ່ການອອກໄປຕິດຕາມແລະຊອກຫາຜູ້ທີ່ບໍ່ເຊື່ອແລະເຜີຍແຜ່ທິດທາງການດຳຣົງຊີວິດໂດຍມີພຣະເຈົ້າໃຫ້ເຂົ້າໄປໃນຮີດຄອງປະເພນີທີ່ພວກເຂົາດຳຣົງຊີວິດຢູ່.

**໒. <u>ຈົ່ງໃຫ້ພຣະເຈົ້າໃຊ້ທ່ານ</u>:** (1 ໂກຣິນໂທ. 1:26-31 )

ມື້ເຊົ້ານີ້ຂ້າພະເຈົ້າໄດ້ອ່ານໜັງສືພິມທີ່ພາດຫົວຂ່າວກ່ຽວກັບ Billy Graham. ທ່ານຫາກໍ່ໄດ້ສລຸບຜົນຂອງວຽກ

ງານການເຜີຍແຜ່ຂ່າວປະເສີດຄັ້ງສຸດທ້າຍທີ່ເມືອງ ນິວຢອກ. ຜູ້ຂຽນໄດ້ເວົ້າເຖິງທ່ານ Graham ໄດ້ອອກໄປເທສນາໃຫ້ຄົນຫລາຍກວ່າ 210 ລ້ານຄົນໄດ້ຍິນແລະໄປ 185 ປະເທດໃນທົ່ວໂລກໃນລະຍະເວລາ 60 ປີທີ່ຜ່ານມາ; ນັບໄດ້ວ່າທ່ານເປັນຜູ້ມີຊື່ສຽງແລະເປັນທີ່ຮູ້ຈັກດີຢູ່ທົ່ວໂລກ. ໃນການສຳພາດຄັ້ງຫລັງສຸດນີ້ ທ່ານ Dr. Graham ໄດ້ເວົ້າວ່າເມື່ອໃດຂ້າພະເຈົ້າໄປເຖິງສວັນຄຳຖາມທີແລກທີ່ຂ້າພະເຈົ້າຈະຖາມພຣະເຈົ້າກໍຄື: ພຣະເຈົ້າເອີຍ, ເປັນຫຍັງພຣະອົງຈຶ່ງເລືອກເດັກນ້ອຍຜູ້ຊາຍຊາວສວນຄົນນຶ່ງຂອງ North Carolina ໃຫ້ມາເປັນຜູ້ປະກາດໃຫ້ຄົນທົ່ວໂລກ.

ໃນພຣະທັມຂໍ້ນີ້ໂປໂລໄດ້ບອກພີ່ນ້ອງຄຣິສຕຽນທີ່ເມືອງໂກຣິນໂທໃຫ້ **ພິຈາຣະນາເບິ່ງພວກເຈົ້າທີ່ພຣະເຈົ້າໄດ້ຊົງໂຜດເອີ້ນມາ.** ເພິ່ນໄດ້ບອກເຖິງພຣະເຈົ້າໄດ້ເອີ້ນມາເພື່ອໃຫ້ໄດ້ຮັບຄວາມລອດພົ້ນແລະເປັນຜູ້ນຶ່ງທີ່ດຳຣົງຊີວິດແບບຄຣິສຕຽນແທ້. ເພິ່ນໄດ້ຊີ້ໃຫ້ເຫັນວ່າບໍ່ມີຫລາຍຄົນເທົ່າໃດ, ຄືຄົນທີ່ມະນຸດຄິດວ່າ, ໂດຍສະເພາະແລ້ວກໍຄື ຜູ້ທີ່ສລາດ, ຜູ້ທີ່ມີອຳນາດ, ຫລື ຜູ້ທີ່ມີຖານະສູງກໍມີໜ້ອຍ. ຕາມສະຕິປັນຍາຂອງພຣະເຈົ້າແລະຕາມມາດຕະຖານຂອງມະນຸດ, **ພຣະເຈົ້າໄດ້ຊົງເລືອກເອົາສິ່ງທີ່ມະນຸດຖືວ່າໂງ່ນັ້ນ ເພື່ອຈະໃຫ້ຄົນສລາດຖືກອັບອາຍ. ແລະພຣະເຈົ້າໄດ້ເລືອກເອົາສິ່ງທີ່ມະນຸດຖືວ່າອ່ອນກຳລັງເພື່ອໃຫ້ຄົນທີ່ມີກຳລັງຖືກອັບອາຍ.**

ເພາະວ່າວິຫານທີ່ເມືອງໂກຣິນໂທນັ້ນລວມທັງພວກທີ່ເປັນທາດແລະພວກອື່ນໆ ດ້ວຍໂດຍພວກເຂົາໄດ້ເບິ່ງການປະຕິບັດຕາມປະເພນີນັ້ນຖືວ່າເປັນຄົນບ້າແລະເປັນຄົນທີ່ອ່ອນແອ. ແລະພຣະເຈົ້າກໍຍັງໄດ້ເລືອກທີ່ຈະຊ່ວຍໃຫ້ຄົນທີ່ມະນຸດຖືວ່າຕ່ຳຕ້ອຍແລະດູຫມິ່ນ. ດັ່ງການສະແດງອອກມາພາຍນອກທີ່ໂລກໄດ້ຕັດສິນວ່າເປັນຄົນດີ, ແຕ່ຈຸດປະສົງຂອງພຣະເຈົ້າໃນເຣື່ອງນີ້ແມ່ນມະນຸດເຫັນວ່າ**ບໍ່ສຳຄັນເພື່ອທຳລາຍສິ່ງທີ່ມະນຸດເຫັນວ່າສຳຄັນ.** ໃນຄຳອື່ນພຣະຄຳຂອງຂອງພຣະເຈົ້າແມ່ນປົ່ນຈາກສິ່ງທີ່ມີຣາຄາຫລາຍທີ່ສຸດ: ຄືຄົນຜູ້ນຶ່ງທີ່ມະນຸດຕີຣາຄາວ່າຍິ່ງໃຫຍ່ທີ່ສຸດໃຫ້ເປັນຜູ້ທີ່ບໍ່ມີຫຍັງເລີຍໃນການວັດແທກຕາມມາດຕະຖານແຫ່ງຄວາມຈິງຂອງພຣະເຈົ້າ.

ດ້ວຍເຫດຜົນການວັດແທກຄຸນຄ່າຂອງພຣະເຈົ້າຄື **ເພື່ອຈະບໍ່ໃຫ້ມະນຸດຄົນໃດອວດຕົວໄດ້ຕໍ່ພຣະພັກພຣະເຈົ້າ**-ບໍ່ມີຜູ້ໃດຈະສາມາດກ່າວຄຳຫລອກລວງເຣື່ອງຄວາມຈິງໃນຄວາມສາມາດ, ໃຫ້ອອກຈະພຣະຄຸນຂອງພຣະເຈົ້າໄປໄດ້. ແລະເຫດຜົນກໍຄື: ສິ່ງສຳຄັນແລະມີຄຸນຄ່າທີ່ຄືສະຕິປັນຍາຈາກພຣະເຈົ້າ...ຄວາມຊອບທັມ, ຊຳຣະລ້າງ, ແລະຄວາມພົ້ນ. ໃນທຸກສິ່ງນີ້ແມ່ນຂອງພຣະຣາຊທານຈາກພຣະເຈົ້າໃຫ້ແກ່ພວກເຮົາໂດຍຜ່ານພຣະເຢຊູຄຣິດ. ພຣະອົງຊົງເປັນພຣະປັນຍາຂອງພຣະເຈົ້າ; ພຣະອົງຊົງເປັນຜູ້ປະທານໃຫ້ຄວາມຊອບທັມຄື ( ມີສິດທີຊອບທັມໃນການມີຄວາມສຳພັນກັບພຣະເຈົ້າ ) ; ພຣະອົງເປັນຊົງເປັນຜູ້ຊຳຣະລ້າງພວກເຮົາ; ( ແຍກອອກຕ່າງຫາກເພື່ອຈະມີຄວາມພ້ອມທີ່ຈະໃຊ້ງານຂອງພຣະເຈົ້າ ); ພຣະອົງຊົງເຮັດໃຫ້ພວກເຮົາບໍຣິສຸດ( ນຳພວກເຮົາອອກມາຈາກການຜູກມັດຂອງຄວາມບາບ ) ທັງຫມົດນີ້ກໍເປັນຂອງພຣະຣາຊທານຈາກພຣະເຈົ້າ, ບໍ່ແມ່ນພວກເຮົາຈະເຮັດໄດ້ດ້ວຍຄວາມສາມາດຂອງຕົວເອງ. ເຫດສັນນັ້ນ, **ຈຶ່ງບໍ່ມີມະນຸດຈັດຄົນອວດຕົວໄດ້ຕໍ່ພຣະພັກພຣະເຈົ້າ.** ແລະທັງຫມົດພຣະກຽດກໍເປັນຂອງພຣະເຈົ້າ!

ພວກເຮົາຄວນຈະມີການຕອບສນອງຕໍ່ຄວາມຈິງເຫລົ່ານີ້ແນວໃດ? ທີນຶ່ງ, ພວກເຮົາຈະບໍ່ຫມິ່ນປມາດຕົວເອງແລະຜູ້ເຊື່ອຄົນອື່ນໆ ວ່າເປັນຄົນອ່ອນແອຫລືຮຽນບໍ່ໄດ້ຫລືບໍ່ເຫມາະສົມທີ່ພຣະເຈົ້າຈະໃຊ້ໄດ້. ທີສອງ, ສິ່ງອັສຈັນຂອງຜູ້ທີ່ເຊື່ອໄດ້ເກີດມີໃຫ້ແກ່ພວກເຂົາໃນແຕ່ລະວັນໃນຖານະທີ່ໄດ້ຜ່ານການເປັນຄົນທີ່ພຣະເຈົ້າສາມາດທຳພາຣະກິດຂອງພຣະອົງຢູ່ໃນໂລກ. ແລະສຸດທ້າຍ, ຈົ່ງລະມັດລະວັງໃຫ້ດີໃນການທີ່ຈະໃຫ້ພຣະເຈົ້າໄດ້ຮັບຄວາມໄວ້ວາງໃຈຕລອດໄປໃນຄວາມດີທີ່ພຣະອົງໄດ້ຊົງປະທານຜ່ານທາງພວກເຮົາ-ແລະຜ່ານຕໍ່ໄປເຖິງຄົນອື່ນດ້ວຍ.

### 3. **ຈົ່ງເປັນເກືອແລະແສງສວ່າງແກ່ໂລກ:** ( ມັດທາຍ. 5:13-16 )

ພໍ່ເຖົ້າແມ່ເຖົ້າຂອງຂ້າພະເຈົ້າເປັນຊາວສວນກ່ອນສມັຍທີ່ຈະມີກະແສໄຟຟ້າໃຊ້. ພວກເພິ່ນໄດ້ເກັບຮັກສາຊີ້ນຫມູແລະຊີ້ນງົວຄວາມຫມາຍກໍຄືໄດ້ຜ່ານວິທີຕາມຂັ້ນຕອນ. ທີແລກ, ເອີບຊີ້ນນັ້ນດ້ວຍເກືອ, ແລະກໍນຳໄປຫ້ອຍຢ້າງ " ເຮືອນອົບຄວັນໄຟ " ເປັນເວລາຫລາຍວັນ. ເກືອເປັນແຮ່ທາດທີ່ສາມາດຮັກສາບໍ່ໃຫ້ຊີ້ນເນົ່າເຫມັນແລະສາມາດເກັບຮັກສາໄວ້ກິນດົນໄດ້. ກໍຄືກັນໃນສມັຍພຣະຄຳພີໃຫມ່ທຸກສິ່ງຢ່າງກໍຄືໄດ້ຜ່ານວິທີການຕາມຂັ້ນຕອນເຫມືອນກັນ. ເມື່ອພຣະເຢຊູເວົ້າເຖິງຜູ້ທີ່ເຊື່ອວ່າຈົ່ງເປັນເກືອສຳລັບໂລກ, ພຣະອົງຊົງຫມາຍເຖິງບອກເຖິງການຮັກສາໄວ້ໃນຄວາມເຄັມ

ຄືຄົນທີ່ຮັກສາແລະເອືອບໃຫ້ສັງຄົມທີ່ຢູ່ອ້ອມຕົວເຂົາບໍ່ໃຫ້ເນົ່າເຫມັນຈາກການກົດດັນແລະຜຸພັງໄປ.

ຖ້າຜູ້ທີ່ເຊື່ອແລ້ວຫາກອອກໄປເກີດຜົນກັບຄົນທີ່ຢູ່ອ້ອມຂ້າງກໍເປັນສິ່ງທີ່ຫນ້າຍິນດີທີ່ສຸດ, ມີຢູ່ສອງຢ່າງທີ່ເຂົາຈະເອົາຂໍ້ຄວາມຈາກພຣະທັມນີ້ໄປເປັນຕົວຢ່າງ. ທີນຶ່ງ, ກໍຄືຈະຕ້ອງເຮັດຄືຈົ່ງອອກໄປແລະລົງພື້ນຖານໃຫ້ເຖິງຜູ້ທີ່ມີຄວາມກະຫາຍຢາກຈະປ່ຽນແປງ. ເກືອກໍບໍ່ສາມາດເອືອບຊີ້ນໄດ້ຖ້າຫາກມັນຢູ່ໃນຂວດແລະປິດຝາໄວ້ຢ່າງດີ, ກໍຄືກັບຄຣິສຕຽນຈະຕ້ອງໄດ້ພົວພັນໃຫ້ໄປເຖິງສັງຄົມ. ການແຍກຕົວອອກຢູ່ຕ່າງຫາກຈະບໍ່ເປັນການເອືອບຮັກສາໄວ້ໄດ້.

ທີສອງ, ສຳຄົນທີ່ສຸດຄືຄົນຄຣິສຕຽນຈະຕ້ອງຮັກສາຄຸນສົມບັດຂອງຕົນເອງໄວ້ໃຫ້ດີ; ເຂົາຈະຕ້ອງມີຄວາມແຕກຕ່າງ, ພຣະເຢຊູໄດ້ຊົງເຕືອນໄວ້ດັ່ງນີ້ຄື**ເກືອ**ຈະຕ້ອງຮັກສາ**ຣົດຊາດ**ຄືຄວາມ**ເຄັມ**ໄວ້; ຖ້າບໍ່ດັ່ງນັ້ນກໍບໍ່ມີປໂຍດອັນໃດມີແຕ່ຈະຖິ້ມເສັຽໃຫ້ຄົນຢຽບເທົ່ານັ້ນ. ນີ້ຄືການຫນູນໃຈໃຫ້ຜູ້ທີ່ເຊື່ອໃຫ້ຫັນຫນ້າປະເຊີນກັບຝ່າຍໂລກແຕ່ບໍ່ໃຫ້ເປັນເຫມືອນຝ່າຍໂລກ. ເພື່ອທີ່ຈະໃຫ້ຄຳສອນຂອງພຣະອົງມີຂໍ້ເນັ້ນຫນັກຂຶ້ນຕື່ມໃນເຣື່ອງຂອງການເຜີຍແຜ່, ພຣະເຢຊູໄດ້ໃຊ້ຄຳອຸປມາອັນທີສອງຄືພຣະອົງໄດ້ຊົງກ່າວແກ່ຜູ້ທີ່ໄດ້ຍິນສຽງຂອງພຣະອົງ " ພຣະເຢຊູຊົງຮູ້ວ່າຜູ້ທີ່ບໍ່ເຊື່ອທັງຫມົດຈິດວິນຍານຂອງພວກເຂົາແມ່ນຕົກຢູ່ໃນຄວາມມືດ-ແລະຫລົກຫນີຈາກຄວາມຈິງແຫ່ງຊີວິດ. ມີພຽງແຕ່ຜູ້ທີ່ຮູ້ຈັກພຣະອົງເທົ່ານັ້ນທີ່ມີເກາະປ້ອງກັນຈິດວິນຍານທີ່ຫມັ້ນໃຈ. ແນ່ນອນ, ຄວາມມຸ້ງຫວັງໃນການອອກໄປເຮັດວຽກຂອງຜູ້ທີ່ເຊື່ອຄືຈະບໍ່ໃຫ້ມີສິ່ງໃດຈະເຮັດໃຫ້ປິດບັງຄວາມຈິງທີ່ປາກົດອອກມາໃນການດຳຣົງຊີວິດຂອງເຂົາ.

ຜູ້ທີ່ເຊື່ອກໍຄືກັນກັບ**ເມືອງທີ່ຕັ້ງຢູ່ເທິງພູ**ຈະບັງລັບໄວ້ບໍ່ໄດ້ແລະ**ໂຄມໄຟ**ທີ່ໄຕ້ແລ້ວເອົາ**ຕັ້ງໄວ້ເທິງຮອງຕີນໂຄມ**ສັນນັ້ນ. ພວກທ່ານຄືແສງສະວ່າງຈົ່ງສ່ອງສວ່າງເຖີດ". ຖ້າເປັນພຽງຕະກຽງກໍບໍ່ມີແສງສະວ່າງຂອງຕົວເອງໄດ້, ພວກເຮົາເປັນພຽງແສງສະທ້ອນຂອງພຣະອົງເທົ່ານັ້ນທີ່ສິ່ງສ່ອງຜ່ານມາເຖິງພວກເຮົາ. ຖ້າແຍກຈາກພຣະເຢຊູແລ້ວ, ທຸກຄົນກໍຈະຕົກຢູ່ໃນຄວາມມືດ. ແຕ່ພຣະອົງໄດ້ຊົງສ່ອງແສງຜ່ານເຂົ້າມາເຖິງເພື່ອສະແດງຄວາມຮັກແລະຣິດອຳນາດທີ່ຈະປ່ຽນແປງຊີວິດພວກເຮົາ. ຫນ້າທີ່ຮັບຜິດຊອບຂອງພວກເຮົາບໍ່ແມ່ນເປັນຜູ້ເຮັດໃຫ້ເກີດແສງສະວ່າງ, ແຕ່ເປັນພຽງຕະກຽງທີ່ໄດ້ຮັບແສງສະທ້ອນຂອງພຣະອົງທີ່ສ່ອງຜ່ານເຂົ້າມາທາງເຮົາເທົ່ານັ້ນ.

ພຣະເຢຊູພຣະອົງດຽວທີ່ເປັນທາງໄປສູ່ຄວາມສະວ່າງເພື່ອທີ່ຈະເຫັນໄດ້: **ໃນການ**ດີທີ່ທ່ານໄດ້ເຮັດແລ້ວ. ສິ່ງທີ່ຍັງເຫລືອໃນການເທສນາທີ່ຈ້າຍພູແມ່ນໄດ້ອະທິບາຍເຖິງການກະທຳດີຫລາຍຢ່າງພວກນີ້. ໃນປໂຍກນຶ່ງແມ່ນໄດ້ສະແດງອອກທີ່ສຳຄັນທີ່ສຸດໃນການງານຄັ້ງນີ້ກໍຄືການສະແດງອອກໃນເຣື່ອງ ຄວາມຮັກ-ຮັກພຣະເຈົ້າແລະຮັດຄົນອື່ນໆດ້ວຍ. ເມື່ອຄົນອື່ນໄດ້ເຫັນແສງສະວ່າງຂອງພຣະອົງທີ່ໄດ້ແຜ່ກະຈາຍຜ່ານ**ການ**ດີທີ່ພວກເຮົາເຮັດ, ພວກເຂົາຈະໄດ້ສັຣ**ເສີນ**- ບໍ່ແມ່ນເພື່ອເຮົາເອງ, ແຕ່ເພື່ອ**ພຣະບິດາຜູ້ສະຖິດຢູ່ສວັນ**.

( ອຸປຖັມໂດຍ ລາວຊາວເທີນແບັບຕິສສັມພັນ ແປແລະຮຽບຮຽງ a.p www.lsbf.org )